**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ນາຍົກລັດຖະມົນຕີ** ເລກທີ 23 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 09.04.2018.

ກະຊວງ ກະສິກຳ-ປ່າໄມ້
ຂາເຂົ້າ 01207
10. 04. 18

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016.
- ອີງຕາມແຜນຍຸດທະສາດການສົ່ງເສີມກາເຟລາວ ຮອດປີ 2025 ທີ່ຮັບຮອງ ແລະ ປະກາດໃຊ້ ໂດຍລັດຖະບານ ຕາມດຳລັດ ເລກທີ 190/ລບ, ລົງວັນທີ 09 ມິຖຸນາ 2014.
- ອີງຕາມໜັງສືສະເໜີ ສະບັບເລກທີ 1264/ກປ, ລົງວັນທີ 06 ພະຈິກ 2017 ຂອງກະຊວງ ກະສິກຳ ແລະ ປ່າໄມ້.

## ນາຍົກລັດຖະມົນຕີ ຕົກລົງ:

**ມາດຕາ 1** ແຕ່ງຕັ້ງຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ (ຄສກ) ຊຶ່ງປະກອບມີບັນດາທ່ານ ດັ່ງນີ້:

1. ທ່ານ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເປັນປະທານ
2. ທ່ານ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເປັນຮອງ, ທັງເປັນຜູ້ປະຈຳການ
3. ທ່ານ ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເປັນຮອງ
4. ທ່ານ ຮອງລັດຖະມົນຕີກະຊວງການເງິນ ເປັນຄະນະ
5. ທ່ານ ຮອງຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ເປັນຄະນະ
6. ທ່ານ ຮອງເຈົ້າແຂວງຈຳປາສັກ, ຜູ້ຊີ້ນຳວຽກງານເສດຖະກິດ ເປັນຄະນະ
7. ທ່ານ ຮອງເຈົ້າແຂວງສາລະວັນ, ຜູ້ຊີ້ນຳວຽກງານເສດຖະກິດ ເປັນຄະນະ
8. ທ່ານ ຮອງເຈົ້າແຂວງເຊກອງ, ຜູ້ຊີ້ນຳວຽກງານເສດຖະກິດ ເປັນຄະນະ
9. ທ່ານ ຮອງເຈົ້າແຂວງອັດຕະປື, ຜູ້ຊີ້ນຳວຽກງານເສດຖະກິດ ເປັນຄະນະ
10. ທ່ານ ຮອງເຈົ້າແຂວງຜົ້ງສາລີ, ຜູ້ຊີ້ນຳວຽກງານເສດຖະກິດ ເປັນຄະນະ
11. ທ່ານ ຮອງເຈົ້າແຂວງຫຼວງພະບາງ, ຜູ້ຊີ້ນຳວຽກງານເສດຖະກິດ ເປັນຄະນະ
12. ທ່ານ ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຄະນະ

**ມາດຕາ 2** ຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ ແມ່ນການຈັດຕັ້ງທີ່ບໍ່ປະຈຳການ, ເຄື່ອນໄຫວຕາມແນວທາງຂອງພັກ ແລະ ກົດໝາຍຂອງລັດ ຊຶ່ງມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຊີ້ນຳການຈັດຕັ້ງຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດການສົ່ງເສີມກາເຟລາວ ເພື່ອບັນລຸວິໄສທັດ ແລະ ເປົ້າໝາຍທີ່ວາງໄວ້.

2. ຊຸກຍູ້, ຕິດຕາມ, ກວດກາ ແລະ ໃຫ້ຄຳແນະນຳຕໍ່ສະມາຄົມ, ສະຫະກອນ, ກຸ່ມຜູ້ຜະລິດ ແລະ ຄອບຄົວ ກ່ຽວກັບການຈັດຕັ້ງແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ລວມທັງສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ຊຶ່ງກ່ຽວພັນກັບການພັດທະນາ ແລະ ສົ່ງເສີມກາເຟລາວ.
3. ຄົ້ນຄວ້າ ແລະ ນຳສະເໜີລັດຖະບານ ເພື່ອພິຈາລະນາຮັບຮອງ ແລະ ປະກາດໃຊ້ບັນດານິຕິກຳ ກ່ຽວກັບການປົກປ້ອງ, ສົ່ງເສີມ ແລະ ພັດທະນາກາເຟລາວ.
4. ວິເຄາະ, ວິໄຈສະພາບ ແລະ ບັນຫາ, ສະໜອງຂໍ້ມູນຂ່າວສານດ້ານການຕະຫຼາດ, ລາຄາ, ແນະນຳການນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າທັນສະໄໝ ແນໃສ່ສ້າງມູນຄ່າເພີ່ມ, ຫຼຸດຜ່ອນຕົ້ນທຶນ ແລະ ເພີ່ມລາຍຮັບໃຫ້ຜູ້ຜະລິດ.
5. ປະສານສົມທົບ, ປຸກລະດົມ ແລະ ຍາດແຍ່ງການສະໜັບສະໜູນດ້ານທຶນຮອນ, ເຕັກໂນໂລຊີ, ບົດຮຽນ ແລະ ວິຊາການຈາກບຸກຄົນທັງພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາ ແລະ ສົ່ງເສີມກາເຟລາວ.
6. ຊີ້ນຳ, ຊຸກຍູ້ ແລະ ສົ່ງເສີມການຈັດຕັ້ງກຸ່ມ, ສະຫະກອນ ແລະ ສະມາຄົມຜູ້ຜະລິດກາເຟ ຕາມກົດໝາຍ ແລະ ລະບຽບການກຳນົດ.
7. ຊີ້ນຳຄຸ້ມຄອງດັດສົມ, ເອື້ອອຳນວຍຄວາມສະດວກ ແລະ ແກ້ໄຂບັນຫາສຳຄັນຕ່າງໆ ຂອງການຜະລິດ, ການປຸງແຕ່ງ, ການຄ້າຂາຍ, ການສົ່ງອອກ ແລະ ການບໍລິໂພກກາເຟລາວ; ໃນກໍລະນີມີບັນຫາກ່ຽວກັບຂະແໜງການອື່ນ ແມ່ນໃຫ້ນຳໃຊ້ຄະນະປະສານງານຂັ້ນສູນກາງ ເພື່ອສົ່ງເສີມການຜະລິດເປັນສິນຄ້າ ແລະ ໂຄງການຄ້ຳປະກັນຄວາມໝັ້ນຄົງດ້ານສະບຽງອາຫານເຂົ້າມາມີສ່ວນຮ່ວມໃນການແກ້ໄຂ.
8. ກຳນົດແຜນວຽກໃນແຕ່ລະໄລຍະ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ ພ້ອມທັງດຳເນີນການສະຫຼຸບຖອດຖອນບົດຮຽນ ແລະ ລາຍງານໃຫ້ລັດຖະບານຊາບ ຢ່າງເປັນປົກກະຕິ.
9. ແຕ່ງຕັ້ງກອງເລຂາຂັ້ນສູນກາງ ເພື່ອຊ່ວຍວຽກ ຕາມຄວາມເໝາະສົມ.
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຈາກຂັ້ນເທິງ.

**ມາດຕາ 3** - ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນໃຈກາງໃນການປະສານກັບພາກສ່ວນ ທີ່ກ່ຽວຂ້ອງ ແລະ ຊີ້ນຳການເຄື່ອນໄຫວ ຂອງຄະນະດັ່ງກ່າວ ຕາມສິດ ແລະ ໜ້າທີ່ ທີໄດ້ກຳນົດໃນມາດຕາ 2.

- ມອບໃຫ້ກະຊວງ ແລະ ແຂວງທີ່ກ່ຽວຂ້ອງ ແຕ່ງຕັ້ງຮອງລັດຖະມົນຕີ ແລະ ຮອງເຈົ້າແຂວງທີ່ຮັບຜິດຊອບວຽກທີ່ກ່ຽວຂ້ອງ ເພື່ອປະກອບເຂົ້າໃນຄະນະດັ່ງກ່າວ, ແລ້ວສົ່ງໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອຊາບ.
- ສຳລັບກອງເລຂາຊ່ວຍວຽກຢູ່ຂັ້ນແຂວງ ແມ່ນມອບໃຫ້ເຈົ້າແຂວງ ເປັນຜູ້ແຕ່ງຕັ້ງຕາມຄວາມເໝາະສົມ.

**ມາດຕາ 4** ອົງການປົກຄອງທ້ອງຖິ່ນ ນອກຈາກວຽກປົກກະຕິແລ້ວ ຍັງມີໜ້າທີ່ຮັບຜິດຊອບ ດັ່ງນີ້:

1. ໃຫ້ການຮ່ວມມື, ເອື້ອອຳນວຍຄວາມສະດວກ ແລະ ຊຸກຍູ້ສົ່ງເສີມວຽກງານກາເຟລາວ ຢູ່ທ້ອງຖິ່ນຂອງຕົນ.
2. ເປັນເຈົ້າການປຸກລະດົມ, ຂົນຂວາຍ ແລະ ແກ້ໄຂຂໍ້ຂັດແຍ່ງຕ່າງໆ ທີ່ກ່ຽວຂ້ອງກັບວຽກງານກາເຟລາວ ໃນທ້ອງຖິ່ນຂອງຕົນ.

3. ປະສານສົມທົບກັບຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ ເພື່ອພັດທະນາວຽກງານກາເຟ ໃຫ້ມີການຂະຫຍາຍຕົວທັງດ້ານປະລິມານ ແລະ ຄຸນນະພາບ.

**ມາດຕາ 5** ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ, ບັນດາແຂວງ, ທຸກພາກສ່ວນທີ່ກ່ຽວຂ້ອງ, ພ້ອມດ້ວຍບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 6** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງຂອງນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ ສະບັບ ເລກທີ 58/ນຍ, ລົງວັນທີ 25 ມິຖຸນາ 2010.

**ນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ

ທອງລຸນ **ສີສຸລິດ**